ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

0265-[illegible]

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0265/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 15 MAR 2019

# ຂໍ້ຕົກລົງ
## ວ່າດ້ວຍການແບ່ງຂັ້ນຄຸ້ມຄອງ
## ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

- ອີງຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 048/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມກົດໝາຍວ່າດ້ວຍ ຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມໜັງສືສະເໜີ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1439/ກອຫ.ຄຣ, ລົງວັນທີ 20 ທັນວາ 2018.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດສິດ ແລະ ໜ້າທີ່ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອອອກໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ, ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເຄມີ, ການຂຶ້ນທະບຽນບັນຊີເຄມີ ແລະ ໃບຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ແລະ ປ່ອຍສິ່ງເສດເຫຼືອ ລວມທັງການຕິດຕາມ ແລະ ກວດກາມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ສະພາບການດຳເນີນກິດຈະການ ຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການແບ່ງຂັ້ນຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ**

ການແບ່ງຂັ້ນຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປະກອບມີ 3 ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕາມພາລະບົດບາດຂອງຕົນ ໃນຂອບເຂດທົ່ວປະເທດ;

2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງໂຮງງານອຸດສາຫະກຳ ປຸງແຕ່ງ ແລະ ຫັດຖະກຳ ຕາມພາລະບົດບາດຂອງຕົນ ໃນຂອບເຂດແຂວງ, ນະຄອນຫຼວງວຽງຈັນ;

3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕາມພາລະບົດບາດຂອງຕົນ ໃນຂອບເຂດເມືອງ, ນະຄອນ.

**ມາດຕາ 3 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກ, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດຳເນີນທຸລະກິດຂະໜາດໃຫ່ຍ, ຂະໜາດກາງ ແລະ ຂະໜາດນ້ອຍ ທີ່ນອນໃນບັນຊີທີ່ຕ້ອງຂໍອະນຸຍາດ ນຳກະຊວງອຸດສາຫະກຳ ແລະ ການຄ້າ;

2. ອອກ, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານຂອງໂຮງງານຂະໜາດໃຫຍ່ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ແລະ ບັນຊີຄວບຄຸມຂອງຂະແໜງການແຜນການ ແລະ ການລົງທຶນ. ໃນກໍລະນີມີຄວາມຈຳເປັນ ໃຫ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ເປັນແຕ່ລະກໍລະນີ.

3. ອອກ, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເຄມີ ແລະ ໃບທະບຽນທາດເຄມີ;

4. ອອກໃບຢັ້ງຢືນຜະລິດຕະພັນໂຮງງານ ຕາມມາດຕາ 4 ແລະ ມາດຕາ 63 ຂອງກົດໝາຍວ່າດ້ວຍມາດຕະຖານ;

5. ອອກໃບຢັ້ງຢືນລະບົບບຳບັດ ແລະ ການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານຂະໜາດໃຫຍ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຢັ້ງຢືນການສົ່ງຜ່ານ ເຄມີອັນຕະລາຍ ປະເພດ 2, ປະເພດ 3 ແລະ ສິ່ງເສດເຫຼືອອັນຕະລາຍ;

7. ຢັ້ງຢືນ ການນຳເຂົ້າ ວັດຖຸດິບ, ເຄື່ອງຈັກ, ຊິ້ນສ່ວນ-ອາໄຫຼ່ເຄື່ອງຈັກ, ຊິ້ນສ່ວນ-ອາໄຫຼ່ຍານພາຫະນະ ແລະ ອຸປະກອນຮັບໃຊ້ ການກໍ່ສ້າງໂຮງງານ, ການຜະລິດ ຂອງໂຮງງານຂະໜາດໃຫຍ່ ໂດຍພິຈາລະນາຕາມບົດວິພາກເສດຖະກິດ-ເຕັກນິກ, ກວດກາຢັ້ງຢືນ ແຜນການຜະລິດປະຈຳປີ, ແຜນການປັບປຸງ ແລະ ແຜນການຂະຫຍາຍໂຮງງານ;

8. ຄຸ້ມຄອງ, ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ດ້ານສິ່ງແວດລ້ອມ, ເຄມີ ແລະ ສະພາບການດຳເນີນກິດຈະການໂຮງງານ ໃນຂອບເຂດທົ່ວປະເທດ.

**ມາດຕາ 4 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກ, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ຄື: ໂຮງງານຂະໜາດກາງ, ຂະໜາດນ້ອຍ ແລະ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ. ການລົງກວດກາໂຮງງານ ຂະໜາດກາງ ແລະ ຂະໜາດນ້ອຍ ກ່ອນ ຫຼື ຫຼັງ ການອອກໃບຢັ້ງຢືນ ໃນກໍລະນີຈຳເປັນ ໃຫ້ປະສານສົມທົບກັບກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມນຳ ຕາມແຕ່ລະກໍລະນີ;

2. ອອກໃບຢັ້ງຢືນຜະລິດຕະພັນໂຮງງານ;

3. ອອກໃບຢັ້ງຢືນລະບົບບຳບັດ ແລະ ການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ສະເໜີ ອອກ, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເຄມີ ແລະ ໃບທະບຽນທາດເຄມີ, ອະນຸຍາດການນຳເຂົ້າ-ສົ່ງອອກ ເຄມີ ແລະ ສິ່ງເສດເຫຼືອອັນຕະລາຍ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ສະພາບການດຳເນີນກິດຈະການໂຮງງານ ໃນຂອບເຂດ ແຂວງ, ນະຄອນຫຼວງວຽງຈັນ;

6. ຢັ້ງຢືນ ການນຳເຂົ້າ ວັດຖຸດິບ, ເຄື່ອງຈັກ, ຊິ້ນສ່ວນ-ອາໄຫຼ່ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ ການກໍ່ສ້າງໂຮງງານ, ການຜະລິດ ຂອງໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ໂດຍພິຈາລະນາຕາມ ບົດວິພາກເສດຖະກິດ-ເຕັກນິກ, ກວດກາຢັ້ງຢືນ ແຜນການຜະລິດປະຈຳປີ, ແຜນການປັບປຸງ ແລະ ແຜນການຂະຫຍາຍໂຮງງານ;

7. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວ, ມາດຕະຖານເຕັກນິກຂອງໂຮງງານ, ສິ່ງແວດລ້ອມໂຮງງານ ແລະ ເຄມີ, ສະຖິຕິອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລ້ວສົ່ງໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ.

**ມາດຕາ 5 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກ, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານຂະໜາດນ້ອຍແບບຄອບຄົວ ທີ່ນຳໃຊ້ແຮງງານຄົນຕ່ຳກວ່າ 10 ຄົນ ຫຼື ນຳໃຊ້ເຄື່ອງຈັກ ຕ່ຳກວ່າ 10 ແຮງມ້າ ທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ຍົກເວັ້ນໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີໄມ້ ທຸກຂະໜາດ ແລະ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ;

ການລົງກວດກາໂຮງງານ ຂະໜາດນ້ອຍແບບຄອບຄົວ ແລະ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ກ່ອນ ຫຼື ຫຼັງ ການອອກໃບຢັ້ງຢືນ ໃນກໍລະນີຈຳເປັນ ໃຫ້ປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳຕາມແຕ່ລະກໍລະນີ.

2. ອອກໃບຢັ້ງຢືນຜະລິດຕະພັນໂຮງງານຂະໜາດນ້ອຍແບບຄອບຄົວ ແລະ ຕາມການມອບໝາຍຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ;

3. ສະເໜີ ອອກ, ໂຈະ, ຖອນ, ຍົກເລີກໃບອະນຸຍາດດຳເນີນທຸລະກິດກ່ຽວກັບເຄມີ ແລະ ໃບທະບຽນທາດເຄມີ, ການອະນຸຍາດການນຳເຂົ້າ-ສົ່ງອອກ ເຄມີ ແລະ ສິ່ງເສດເຫຼືອອັນຕະລາຍ;

4. ຄຸ້ມຄອງ, ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂານາໄມ, ດ້ານສິ່ງແວດລ້ອມ, ເຄມີ ແລະ ສະພາບການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດ ເມືອງ, ນະຄອນ;

5. ຢັ້ງຢືນແຜນການເຄື່ອນໄຫວປະຈຳງວດ, ປີ ຕາມການມອບໝາຍຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ;

6. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວ, ມາດຕະຖານເຕັກນິກຂອງໂຮງງານ, ສິ່ງແວດລ້ອມໂຮງງານ ແລະ ເຄມີ, ສະຖິຕິອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລ້ວສົ່ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ.

### ມາດຕາ 6 ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ຊີ້ນຳ, ຕິດຕາມ, ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ໂດຍໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ແລະ ໃຫ້ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ ຂອງຕົນ ໃຫ້ໄດ້ຮັບຜົນດີ.

### ມາດຕາ 7 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ສະບັບເລກທີ 1195/ ອຄ, ລົງວັນທີ 19 ມິຖຸນາ 2009.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ